Source: OpenCommunityContracts.org

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

= = = 0 0 0 = = =

ເມືອງວິລະບູລີ — ເລກທີ 326/ຈມວລ

ໂຄງການກອງທຶນພັດທະນາທ້ອງຖິ່ນ — ລົງວັນທີ 24 OCT 2013

## ກົດລະບຽບການນຳໃຊ້ກອງທຶນພັດທະນາທ້ອງຖິ່ນ

- ອີງຕາມສັນຍາສະບັບແກ້ໄຂເພີ່ມເຕີມ MEPA ລະຫວ່າງລັດຖະບານລາວ ແລະ ບໍລິສັດອົກຊີອານາໃນປີ 2004.
- ອີງໃສ່ແຜນຍຸດທະສາດພັດທະນາເມືອງວິລະບູລີ ໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກ ກ່ອນທ້າຍປີ 2015.
- ອີງໃສ່ການປຶກສາຫາລືລະຫວ່າງ ຜູ້ຮັບຜິດຊອບໂຄງການກອງທຶນພັດທະນາທ້ອງຖິ່ນເມືອງວິລະບູລີ ແລະ ບໍລິສັດລ້ານຊ້າງ ເພື່ອປະຕິບັດໂຄງການໃຫ້ມີປະສິດທິພາບ ແລະ ມາດຕະຖານ.

### ກ. ພາກສະເໜີ.

ກອງທຶນພັດທະນາທ້ອງຖິ່ນເມືອງວິລະບູລີ ໄດ້ຖືກຈັດຕັ້ງຂຶ້ນໃນປີ 2003, ຊຶ່ງສອດຄ່ອງກັບໃບຢັ້ງຢືນ ສິ່ງແວດລ້ອມສຳລັບການຈັດຕັ້ງປະຕິບັດວຽກງານ ຂອງບໍ່ທອງ-ຄຳເຊໂປນ.

ໂດຍປະຕິບັດຕາມສັນຍາໃນເອກະສານເມປາ (MEPA) ໃນມາດຕາທີ 24 ລະຫວ່າງລັດຖະບານ ສ.ປ.ປ.ລາວ ແລະ ບໍລິສັດລ້ານຊ້າງມິເນໂຣນລິມິເຕັດ ວ່າດ້ວຍການສຳຫລວດຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ມາດຕາ 3, ໜ້າ 3 ແລະ ກິດຈະກຳໃນໄລຍະການດຳເນີນການຂຸດຄົ້ນທີ່ບໍ່ຄຳເຊໂປນ.

ຫລັກການທີ່ເປັນພື້ນຖານທົ່ວໄປ ຂອງກອງທຶນພັດທະນາທ້ອງຖິ່ນ ແມ່ນເພື່ອສະໜັບສະໜູນຊຸມຊົນທີ່ຖືກຜົນກະທົບຈາກກິດຈະການ ການດຳເນີນໂຄງການບໍ່ແຮ່, ພາຍໃຕ້ການຮ່ວມມືກັບເມືອງ, ແຂວງ ແລະ ລັດຖະບານ. ຈຸດປະສົງຂອງຫລັກຂອງກອງທຶນ ແມ່ນເພື່ອຊ່ວຍໃຫ້ບັນລຸເປົ້າໝາຍການລົບລ້າງຄວາມທຸກຍາກຂອງຊຸມຊົນທີ່ຖືກຜົນກະທົບ ຈາກກິດຈະກຳການດຳເນີນງານ ຂອງໂຄງການບໍ່ແຮ່ ໂດຍຜ່ານກິດຈະກຳໂຄງການ ການສຶກສາ, ສາທາລະນະສຸກ, ວິຖີການດຳລົງຊີວິດ ແລະ ການກໍ່ສ້າງພື້ນຖານໂຄງລ່າງ.

ໂດຍທົ່ວໄປແລ້ວ ໂຄງການຕ່າງໆທີ່ຖືກຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແມ່ນມີລັກສະນະ ເປັນກອງທຶນເສີມ ແລະ ສອດຄ່ອງກັບແຜນພັດທະນາຂອງເມືອງ ແລະ ຂອງແຂວງ.

### ຂ. ຈຸດປະສົງ.

ຈຸດປະສົງເອກະສານສະບັບນີ້ແມ່ນ: (ກ) ເພື່ອຄວາມເປັນເອກະພາບກ່ຽວກັບກົດລະບຽບ ໃນການນຳໃຊ້ງົບປະມານກອງທຶນ, (ຂ) ເພື່ອສ້າງໃຫ້ເປັນແນວທາງການບໍລິຫານງົບປະມານ ສຳລັບຄະນະກຳມະການຄຸ້ມຄອງບໍລິຫານກອງທຶນ ໃນການອະນຸມັດໂຄງການປະຈຳປີ.

## ຄ. ກົດລະບຽບຂອງການນຳໃຊ້ງົບປະມານກອງທຶນພັດທະນາທ້ອງຖິ່ນເຊໂປນ. (ກອງທຶນພັດທະນາທ້ອງຖິ່ນເມືອງວິລະບູລີ)

### 1. ຈຸດປະສົງໂຄງການ.

1.1 ຄືດັ່ງໃນພາກສະເໜີຂ້າງເທິງ, ຈຸດປະສົງຫລັກຂອງກອງທຶນ ແມ່ນເພື່ອຊ່ວຍການລົບລ້າງຄວາມທຸກຍາກໃນເມືອງວິລະບູລີ ໂດຍຜ່ານໂຄງການ ການບໍລິການຂັ້ນພື້ນຖານໃຫ້ແກ່ຊຸມຊົນເຊັ່ນ: ການສຶກສາ, ສາທາລະນະສຸກ (ລວມທັງນ້ຳສະອາດ ແລະ ສຸຂາອະນາໄມ), ວິຖີການດຳລົງຊີວິດ ແລະ ໂຄງການ ການກໍ່ສ້າງພື້ນຖານໂຄງລ່າງ. ຜົນໄດ້ຮັບຂອງໂຄງການ ຈະສຸມໃສ່ໂຄງການຕ່າງໆດັ່ງລຸ່ມນີ້:

**ກ).** ໃນພາກປະຕິບັດຕົວຈິງຂອງການຈັດຕັ້ງປະຕິບັດໂຄງການ, ຜູ້ໄດ້ຮັບຜົນປະໂຫຍດແມ່ນຊຸມຊົນ(ທາງກົງ ແລະ ທາງອ້ອມ) ແລະ ຖືກຕາມເປົ້າໝາຍຂອງການລົບລ້າງຄວາມທຸກຍາກ, ໂດຍສະເພາະແລ້ວໂຄງການຕ່າງໆເຫລົ່ານັ້ນ ແມ່ນໃຫ້ຜົນປະໂຫຍດໂດຍກົງກັບແມ່ຍິງ ແລະ ເດັກນ້ອຍຫລື,

**ຂ).** ເສີມສ້າງຄວາມສາມາດ ໃຫ້ແກ່ພະນັກງານຂອງເມືອງ ເພື່ອເພີ່ມທັກສະການບໍລິການຕ່າງໆ ທີ່ເປັນພື້ນຖານໃຫ້ແກ່ຊຸມຊົນ, ໂດຍຜ່ານອົງການຈັດຕັ້ງຂອງເມືອງ, ບ້ານ, ຊຸມຊົນ ແລະ ອົງການຈັດຕັ້ງມະຫາຊົນເຊັ່ນ: ຊາວໜຸ່ມ, ສະຫະພັນແມ່ຍິງ ແລະ ອົງການກໍ່ສ້າງແນວລາວສ້າງຊາດ.

1.2 ການນຳໃຊ້ງົບປະມານດັ່ງກ່າວ ໂດຍຜ່ານເມືອງວິລະບູລີ ເພື່ອສະໜອງໃຫ້ແກ່ປະຊາຊົນ ຜູ້ທີ່ຖືກກະທົບໂດຍກົງຈາກບໍ່ແຮ່. ໂຄງການຕ່າງໆທີ່ນອນຢູ່ໃນພື້ນທີ່ເຂດນອກ ຂອງກິດຈະການບໍ່ແຮ່ ອາດຈະຖືກພິຈາລະນາເຊັ່ນດຽວກັນ ຖ້າຫາກໂຄງການເຫລົ່ານັ້ນເປັນການສ້າງຜົນປະໂຫຍດໂດຍກົງ ທາງດ້ານການພັດທະນາ ແລະ ລົບລ້າງຄວາມທຸກຍາກໃຫ້ແກ່ເມືອງວິລະບູລີ.

### 2. ການອະນຸມັດໂຄງການ.

2.1 ການອະນຸມັດໂຄງການຕ່າງໆ ແລະ ງົບປະມານຈະຕ້ອງຖືກທົບທວນຄືນ ແລະ ຖືກອະນຸມັດຢູ່ໃນກອງປະຊຸມປະຈຳປີ, ໂດຍອີງໃສ່ການພິຈາລະນາຄົ້ນຄ້ວາຢູ່ໃນກອງປະຊຸມວິຊາການທີ່ຈັດຂຶ້ນຢູ່ໃນເດືອນ 08 ຂອງທຸກໆປີ. ການອະນຸມັດໂຄງການ ແມ່ນຈະຖືກຕັດສິນຢູ່ໃນກອງປະຊຸມປະຈຳປີ, ຊຶ່ງຈັດຂຶ້ນພາຍໃນເດືອນ 09 ຂອງປີ.

2.2 ໂຄງການຕ່າງໆທີ່ໄດ້ຮັບການອະນຸມັດ ຈະຕ້ອງສອດຄ່ອງກັບຈຸດປະສົງຂອງກອງທຶນ ທີ່ໄດ້ລະບຸຢູ່ໃນຂ້າງເທິງ.

2.3 ໂຄງການຕ່າງໆ ບໍ່ສາມາດລົງມືຈັດຕັ້ງປະຕິບັດໄດ້ ແລະ ຈະບໍ່ພິຈາລະນາໃຫ້ທຶນ ຈົນກ່ວາເອກະສານໂຄງການເຫລົ່ານັ້ນຖືກເຊັນອະນຸມັດ ໂດຍພະແນກພົວພັນທ້ອງຖິ່ນ ແລະ ເຈົ້າເມືອງ ເມືອງວິລະບູລີ.

2.4 ໃນການປ່ຽນແປງບົດໂຄງການໃໝ່ ຫລືປ່ຽນແປງຫົວຂໍ້ບົດສະເໜີໂຄງການ ພາຍຫລັງກອງປະຊຸມປະຈຳປີສາມາດປຶກສາຫາລື ແລະ ຕົກລົງເປັນເອກະພາບກັນລະຫວ່າງບໍລິສັດລ້ານຊ້າງ ແລະ ເມືອງ ອີງໃສ່ເຫດຜົນທີ່ແທດເໝາະ.

2.5 ການອະນຸມັດໂຄງການກໍ່ສ້າງຕ່າງໆ ຈະຕ້ອງປະຕິບັດຕາມມາດຕະຖານໂຄງການ ແລະ ມາດຕະຖານດັ່ງກ່າວ ຈະຖືກກວດກາຄືນໂດຍເມືອງ ແລະ ບໍລິສັດລ້ານຊ້າງ.

2.6 ຂໍ້ອື່ນໆທີ່ບໍ່ໄດ້ລະບຸຢູ່ໃນການອະນຸມັດໂຄງການທີ່ໄດ້ລະບຸໃນຂ້າງເທິງນັ້ນ ສາມາດປຶກສາຫາລືນຳກັນລະຫວ່າງເມືອງ ແລະ ບໍລິສັດລ້ານຊ້າງ. ເຖິງຢ່າງໃດກໍ່ຕາມ ຂໍ້ຍົກເວັ້ນເຫລົ່ານັ້ນ ຄວນຈະຖືກນຳສະເໜີໃຫ້ຊັດເຈນກ່ອນກອງປະຊຸມປະຈຳປີ ຂອງກອງທຶນພັດທະນາທ້ອງຖິ່ນ.

## 3. ການປະມູນໂຄງການ.

3.1 ໂຄງການທີ່ມີມູນຄ່າ 50,000 ໂດລາ ຫລື ຫລາຍກ່ວາ ແມ່ນຈະຕ້ອງມີການປະມູນ. ການປະມູນໂຄງການເຫລົ່ານັ້ນ ຈະຕ້ອງແຈ້ງຕໍ່ສາທາລະນະ. ຕົວຢ່າງ: ຜ່ານທາງວິທະຍຸ, ໜັງສືພິມ ແລະ ຮູບແບບການສື່ສານອື່ນໆ. ການເປີດຊອງປະມູນ ຈະຕ້ອງມີຢ່າງໜ້ອຍ 3 – 5 ບໍລິສັດຜູ້ສົນໃຈເຂົ້າຮ່ວມ. ສຳລັບໂຄງການທີ່ມີມູນຄ່າຕ່ຳກ່ວາ 50,000 ໂດລາ ຈະຕ້ອງໄດ້ທາບທາມລາຄາຢ່າງໜ້ອຍຈາກ 3 ບໍລິສັດຂອງທ້ອງຖິ່ນ.

3.2 ຄະນະກຳມະການປະມູນ ຄວນປະກອບມີຜູ້ຕາງໜ້າຈາກບໍລິສັດລ້ານຊ້າງ ແລະ ຫ້ອງການຕ່າງໆຂອງເມືອງທີ່ມີສ່ວນກ່ຽວຂ້ອງ.

## 4. ການຈັດຕັ້ງປະຕິບັດໂຄງການ.

4.1 ຫົວໜ້າຫ້ອງການທີ່ກ່ຽວຂ້ອງກັບໂຄງການ / ເຈົ້າຂອງໂຄງການ ຈະເປັນຜູ້ແຕ່ງຕັ້ງພະນັກງານວິຊາການຂອງຕົນ ໃນການຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ. ພະນັກງານຈະສ້າງແຜນການ ແລະ ຮ່າງຕິດຕາມກວດກາຮ່ວມກັບຜູ້ຕາງໜ້າບໍລິສັດລ້ານຊ້າງ ເພື່ອໃຫ້ມີຄວາມໝັ້ນໃຈວ່າໂຄງການຕ່າງໆເຫລົ່ານັ້ນ ໄດ້ຈັດຕັ້ງປະຕິບັດຢ່າງຖືກຕ້ອງຕາມຈຸດປະສົງແລະເປົ້າໝາຍ ຂອງກອງທຶນ. ພະນັກງານວິຊາການ ຈະລາຍງານໃຫ້ແກ່ກອງເລຂາທຸກໆຄັ້ງ ພາຍຫລັງທີ່ໄດ້ລົງຕິດຕາມໂຄງການໃນແຕ່ລະຄັ້ງ.

4.2 ທີມງານຄະນະກຳມະການ ຈະລົງຕິດຕາມ, ກວດກາໂຄງການ ແລະ ລາຍງານຄວາມຄືບໜ້າຂອງໂຄງການເປັນແຕ່ລະໄລຍະ.

4.3 ໂຄງການກໍ່ສ້າງ ແມ່ນມີຄວາມຕ້ອງການໃຫ້ມີການລົງຕິດຕາມຢ່າງເປັນປະຈຳ ເພື່ອໝັ້ນໃຈວ່າ ການປະຕິບັດໂຄງການເຫລົ່ານັ້ນ ແມ່ນຖືກຕ້ອງຕາມຈຸດປະສົງ.

4.4 ທຸກໆໂຄງການທີ່ເປັນການກໍ່ສ້າງ ມີຄວາມຈຳເປັນຕ້ອງໃຫ້ຕິດຕັ້ງແຜ່ນປ້າຍ ທີ່ສະແດງໃຫ້ເຫັນທຶນສະໜັບສະໜູນຈາກ ບໍລິສັດລ້ານຊ້າງ (ຂະໜາດ 120ຊມ x 80ຊມ).

## 5. ການກວດກາໂຄງການ ແລະ ການຈ່າຍໜີ້ທີ່ຄົງຄ້າງ.

5.1 ມູນຄ່າທີ່ຈະຊຳລະໜີ້ໂຄງການ ແມ່ນຂຶ້ນກັບການແບ່ງປັນງົບປະມານ ຂອງຄະນະກຳມະການບໍລິຫານກອງທຶນ. ໂຄງການທີ່ມີມູນຄ່າຫຼາຍ ຈະຖືກຊຳລະເປັນງວດ ໃນແຕ່ລະປີ ຫຼັງຈາກການຢັ້ງຢືນການກວດກາທາງດ້ານເຕັກນິກທັງສາມພາກສ່ວນ. ຄະນະກວດກາ ຈະປະກອບມີຕາງໜ້າຈາກເມືອງ, ບໍລິສັດ ແລະ ຜູ້ຮັບເໝົາ ເປັນຜູ້ເຂົ້າຮ່ວມໃນການກວດກາໂຄງການໃນແຕ່ລະຄັ້ງ.

5.2 ພາຍຫລັງໂຄງການສຳເລັດ ເຈົ້າຂອງໂຄງການ ຈະຕ້ອງປະກອບບົດບັນທຶກ ເພື່ອມອບໂອນໂຄງການດັ່ງກ່າວ ໃຫ້ແກ່ອົງການຈັດຕັ້ງບ້ານ ເພື່ອໃຫ້ເຂົາເຈົ້ານຳໃຊ້ ແລະ ບຳລຸງຮັກສາ.

## 6. ການລາຍງານ.

6.1 ການລາຍງານ ຈະລວມມີລາຍລະອຽດ ເພື່ອເປັນການຢັ້ງຢືນວ່າ: ໂຄງການໄດ້ຖືກປະຕິບັດສຳເລັດ ຕາມເອກະສານຂັ້ນຕອນໃນການປະຕິບັດໂຄງການ.

## 7. ດ້ານການເງິນແລະການນຳໃຊ້ງົບປະມານ.

7.1 ແຜນງົບປະມານປະຈຳປີ ຈະຕ້ອງຖືກອະນຸມັດເປັນທາງການ ໂດຍຄະນະກຳມະການຄຸ້ມຄອງກອງທຶນກ່ອນທີ່ຈະຂຽນບົດສະເໜີໂຄງການ.

7.2 ການແບ່ງງົບປະມານປະຈຳປີໃຫ້ແຕ່ລະຂະແໜງການ ຈະຖືກແບ່ງປັນໂດຍປະທານແລະຄະນະກຳມະການຊີ້ນຳກອງທຶນຂອງເມືອງ. ຫຼັງຈາກນັ້ນ, ແຕ່ລະຫ້ອງການຈະຄຸ້ມຄອງ, ຈັດສັນງົບປະມານຕາມບຸລິມະສິດຂອງແຕ່ລະຫ້ອງການ ແລະ ໂຄງການຈະນຳສະເໜີຕໍ່ກອງປະຊຸມວິຊາການ ແລະ ກອງປະຊຸມປະຈຳປີ.

7.3 ການໃຊ້ຈ່າຍງົບປະມານ ແມ່ນຈະຖືກຈ່າຍໂດຍແຊັກ (ຈະບໍ່ມີການຈ່າຍເປັນເງິນສົດ), ພາຍຫລັງທີ່ໄດ້ເຊັນຢັ້ງຢືນ ຜົນສຳເລັດຂອງໂຄງການ.

7.4 ໃບແຊັກສຳລັບໂຄງການ ຈະຕ້ອງໃຫ້ມີ 2 ລາຍເຊັນ ຈາກປະທານຊີ້ນຳກອງທຶນຝ່າຍເມືອງ ແລະ ຄູ່ຮ່ວມປະທານຝ່າຍບໍລິສັດ. ງົບປະມານ ຈະຖືກໂອນໄປຫາເລກບັນຊີທະນາຄານທີ່ເປີດເປັນທາງການ ຂອງເມືອງວິລະບູລີ.

## 8. ງົບປະມານບໍລິຫານກອງທຶນ.

ຈຸດປະສົງຂອງງົບປະມານນີ້ (15,000 ໂດລາສະຫະລັດ) ແມ່ນຕອບສະໜອງໃຫ້ເມືອງ ເພື່ອນຳໃຊ້ເຂົ້າໃນການສະໜັບສະໜູນຕ່າງໆເຊັ່ນ:

8.1 ຝຶກອົບຮົມ ແລະ ພັດທະນາທາງດ້ານບຸກຄະລາກອນ.

8.2 ສົ່ງເສີມ ແລະ ໃຫ້ການສະໜັບສະໜູນພະນັກງານເມືອງ ລົງປະຕິບັດວຽກງານ ຢູ່ຮາກຖານ.

8.3 ການຈັດຊື້ຊັບສິນຕ່າງໆທີ່ມີມູນຄ່າບໍ່ເຖິງ 2,000 ໂດລາ ທີ່ສະໜອງໃຫ້ແກ່ຫ້ອງການ. ຄ່າໃຊ້ຈ່າຍຕ່າງໆສຳລັບວຽກບໍລິຫານຫ້ອງການ ຄວນນຳໃຊ້ງົບບໍລິຫານ. ຕົວຢ່າງ: ຄ່າພະລັງງານໄຟຟ້າ ແລະ ນ້ຳປະປາ.

8.4 ການຫັກຄ່າບໍລິການທະນາຄານປະຈຳເດືອນ ແມ່ນຈະຕ້ອງຖືກຫັກຈາກງົບບ້ວງບໍລິຫານ.

8.5 ງົບປະມານບໍລິຫານ ແມ່ນບໍ່ອະນຸຍາດນຳໃຊ້ເຂົ້າໃນການຈັດຊື້ພາຫະນະ.

## 9. ງົບປະມານສ້ອມແປງ-ບຳລຸງຮັກສາ

9.1 ງົບປະມານ 30,000 ໂດລາ ເພື່ອການສ້ອມແປງໂຄງການຕ່າງໆປະຈຳປີ. ການຈັດວາງງົບປະມານດັ່ງກ່າວນີ້ ມີຈຸດປະສົງເພື່ອໃຊ້ເຂົ້າໃນການສ້ອມແປງໂຄງການພື້ນຖານໂຄງລ່າງ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງເມືອງ.

## 10. ໜີ້ສິນ ແລະ ການຊຳລະໜີ້ໂຄງການ

10.1 ໂຄງການທີ່ເປັນໂຄງການກໍ່ສ້າງໃຫຍ່ໆ ສ່ວນຫລາຍແມ່ນໃຊ້ງົບປະມານເກີນຈາກງົບປະມານປະຈຳປີຂອງກອງທຶນພັດທະນາທ້ອງຖິ່ນ. ການແບ່ງງົບປະມານໃນການຊຳລະໃນແຕ່ລະປີ ແມ່ນເປັນທາງເລືອກຫນື່ງສຳລັບໂຄງການຕ່າງໆເຫລົ່ານັ້ນ. ບໍລິສັດລ້ານຊ້າງ ແລະເມືອງເຫັນດີວ່າ: ໂອກາດທີ່ເກີດມີຫນີ້ສິນ ແມ່ນອະນຸຍາດໃຫ້ມີໄດ້ ແຕ່ຈະຕ້ອງມີການຕິດຕາມຢ່າງໃກ້ຊິດ ແລະ ຄວບຄຸມຫນີ້ສິນດັ່ງກ່າວໃຫ້ໄດ້ ເພື່ອຫມັ້ນໃຈວ່າ ຫນີ້ສິນຕ່າງໆບໍ່ໃຫ້ກາຍເປັນໜີ້ສິນ ທີ່ບໍ່ສາມາດຄວບຄຸມໄດ້.

10.2 ການນຳສະເຫນີຫນີ້ສິນໂຄງການ ຕ້ອງຖືກນຳສະເໜີ ຕໍ່ກອງປະຊຸມສະຫລຸບປະຈຳປີ, ຊຶ່ງສະແດງ ໃຫ້ເຫັນຫນີ້ສິນເກີດຂຶ້ນໃຫມ່, ຫນີ້ສິນປະຈຸບັນ, ຈຳນວນງົບທີ່ຈະຈ່າຍຊຳລະຫນີ້ສິນພາຍໃນປີ ແລະ ຫນີ້ສິນຄົງຄ້າງໃນຕອນທ້າຍຂອງປີ.

10.3 ທຸກໆໂຄງການໃຫມ່ທີ່ກໍ່ໃຫ້ເກີດມີຫນີ້ສິນໃຫມ່ຈະຕ້ອງສະແດງໃຫ້ເຫັນຢ່າງຊັດເຈນຢູ່ໃນກອງປະຊຸມປະຈຳປີ; ສະແດງໃຫ້ເຫັນຕາຕະລາງການຊຳລະຫນີ້ ແລະ ສະແດງໃຫ້ເຫັນຈຳນວນຕົວເລກ ລວມຫນີ້ສິນທີ່ຍັງຄ້າງ.

10.4 ຫນີ້ສິນສູງສຸດບໍ່ຄວນເກີນກ່ວາ 100% ຂອງມູນຄ່າງົບປະມານກອງທຶນປະຈຳປີ.
ໂດຍທົ່ວໄປຫນີ້ສິນຈະຖືກຮັກສາໄວ້ໃຫ້ຕ່ຳກ່ວາ 250,000 ໂດລາ.

10.5 ຫນີ້ສິນໃຫມ່ທັງຫມົດ ຕ້ອງຖືກຊຳລະຄືນຢູ່ໃນເວລາທີ່ຖືກກຳນົດໄວ້ຢ່າງຊັດເຈນ ແລະ ຕ້ອງຊຳລະໃຫ້ຫມົດຢູ່ໃນແຜນ 5 ປີ (ປີ 2011 -2015).

10.6 ເມືອງຈະເປັນຜູ້ຮັບຜິດຊອບທຸກໆຫນີ້ສິນ ໂຄງການກອງທຶນພັດທະນາທ້ອງຖິ່ນ ໃນອະນາຄົດ.
ໃນກໍລະນີໂຄງການຂຸດຄົ້ນແຮ່ຖືກປິດ ບໍລິສັດຄວນແຈ້ງໃຫ້ເມືອງໄດ້ຮັບຮູ້ລ່ວງໜ້າກ່ອນ 1.5 - 2 ປີ ເພື່ອກະກຽມແຜນການຮອງຮັບທີ່ເຫມາະສົມໄວ້ ແລະ ເພື່ອໃຫ້ເມືອງ ສາມາດຈ່າຍຄືນໜີ້ສິນທີ່ຄົງຄ້າງໄດ້ສຳເລັດຕາມເປົ້າຫມາຍ.

ກົດລະບຽບການນຳໃຊ້ງົບປະມານກອງທຶນນີ້ ແມ່ນຈະມີຜົນນຳໃຊ້ພາຍຫລັງທັງສອງຝ່າຍມີຄວາມເຫັນດີເປັນເອກະພາບ ແລະ ລົງລາຍເຊັນຮ່ວມກັນ. ຂໍ້ຕົກລົງເຫັນດີສະບັບນີ້ ຈະຖືກທົບທວນຄືນໃນ 2 ຫາ 3 ປີ ເພື່ອເຮັດໃຫ້ຕອບສະຫນອງກັບສະພາບການປ່ຽນແປງຕົວຈິງຂອງເສດຖະກິດ-ສັງຄົມ.

ປະທານຄະນະກຳມະການຄຸ້ມຄອງກອງທຶນ
(ເຈົ້າເມືອງ ເມືອງວິລະບູລີ)

ບົວສອນ ມະຫາວົງ

ຄູ່ຮ່ວມປະທານຄະນະກຳມະການຄຸ້ມຄອງກອງທຶນ
(ຜູ້ຈັດການພະແນກພົວພັນທ້ອງຖິ່ນ,
ບໍລິສັດລ້ານຊ້າງມິເນໂຣນສ໌ລິມິເຕັດ)

ສຕີບພ ຈິມເປວ
STEVE GIMPEL

**Lao Peoples' Democratic Republic**

**Peace Independent Democracy Unity Prosperity**

**-------===000===-------**

Vilabouly District

Development Trust Fund

Reg. 326 /DG. VBL

Date 24 /OCT/ 2013

# Development Trust Fund Charter

- According to the Agreement Amending MEPA between the Government of the Lao's People Democratic Republic and Oxiana Resource Laos Limited in 2004.
- According to the Strategic Development Plan of VBL to eradicate poverty by the end of 2015.
- According to the discussion of the Trust Fund Board Management of VBL (Vilabouly District) and MMG-LXML Company to implement projects with effectiveness and standardization.

## A. Introduction

The Community Development Trust Fund was established in 2003 consistent with the Environmental Certificate for the Gold & Copper Operations, and Article 24 of the MEPA, and the Agreement Amending MEPA between the Government of the Lao's People Democratic Republic and Oxiana Resource Laos Limited in article 3, page 3, and will run for the duration of mining operations in Sepon.

The fundamental principles of the Trust Fund are to provide support to the community most affected by the impact of the mine in cooperation with the District, Provincial and Central Government. The purpose of the trust fund is to provide targeted assistance to communities impacted by the mine's operations to eradicate–poverty through sustainable education, health, livelihood and basic infrastructure projects.

Generally projects carried out by the Trust Fund supplement and follow the District and/or Provincial Government development plans.

## B. Purpose

The purpose of this document is (a) To agree the rules and conditions of budget use of Trust Fund, and (b) establish guidelines for the Trust Fund Board Management Committee for the process of annual planning approval.

## C. Development Trust Fund Charter

(Vilabouly Trust Fund Program)

### 1. Purpose of the Trust Fund

i. In line with the introduction above, the primary purpose of the Trust Fund is to assist the District Government to solve/eradicate poverty in Vilabouly District through the delivery of basic community services such as education, health (including water and sanitation), livelihoods and infrastructure projects. As a result, priority will be given to projects that:
   a. Are developmental in nature, benefit the community (directly and indirectly), and meet poverty alleviation or eradication targets, especially for projects that directly benefit women and children; and/or
   b. Strengthen the capacity of District authorities to deliver basic community services, including through government agencies or local village, community, and mass political organisations (such as the Lao Youth and Womens' Union or the Lao National Front for Reconstruction).

ii. The Trust Fund is intended to be used throughout Vilabouly District to provide support to those people directly affected by the impact of the mine, but projects outside will be also ~~be~~ considered in some circumstances if they provide a direct developmental or poverty eradication benefit to the region.

### 2. Project Approval.

i. The proposed projects and budget must be reviewed and approved at the Annual Meeting, taking into account recommendations from the Technical/Informal Meeting in August each year. Final decisions on approved projects will be made in the Annual Meeting in September each year.

ii. Projects must meet the purpose of the Trust Fund as mentioned above.

iii. Projects cannot be started and no funds committed until formal project documents are approved by the Community Relations Department and Vilabouly District.

iv. Changing project proposal details or project title after the Annual Meeting can be reasonably negotiated and adjusted upon agreement by LXML and District.

v. Approval of construction projects have to adhere to the project criteria and be reviewed by the District and LXML

vi. Exceptions to the above agreements can be negotiated in good faith between the District and LXML. However, such exceptions should be presented before the Annual Meeting for consideration.

### 3. Project Tendering

i. Projects with a value of $50,000 or more must be put out to tender. They must be advertised through a public announcement e.g. radio, newspaper etc. A minimum of three, preferably five, closed bids should be received in a competitive bidding process. Any project costing under US$ 50,000 will be negotiated informally with at least three local contractors.

ii. The bid reviewing committee should consist of representatives of LXML and Vilabouly District.

## 4. Project implementation

i. The technical officer assigned to monitor project implementation will be appointed by the head of the funded office. The officer will establish a monitoring check list in consultation with LXML to ensure each project meets its objectives within the scope of the purpose of the Trust Fund. The Officer will report to the Trust Fund secretary unit after each monitoring visit.
ii. The Trust Fund inspection and monitoring teams will periodically monitor and report on progress.
iii. Construction projects require frequent and regular monitoring to ensure objectives are met.
iv. All construction projects are required to include a sign-board (approximately 120cm x 80cm) indicating LXML funding..

## 5. Project Inspection and Repayment

**i.** Milestone payments will be made for large projects, and these payments will be paid year by year after satisfied technical inspection by three parties. The inspection team members will include district, LXML Company and Contractors. Repayment to the project is dependent on the budget allocation of the Trust Fund Board Committee.
**ii.** After each project is completed, the project owner will formally hand it over to the Village Authorities in order to use and maintain it.

## 6. Reporting

**i.** Reporting will include detailed confirmation that the project has been completed in line with the original guidelines.

## 7. Financial Clarification

i. The annual budget plan has to be approved formally by the Trust Fund Board Management before drafting project proposals.
ii. The sectoral annual budget division will be identified by the Vilabouly Leadership. After that, each office will manage the allocated budget according to their priorities. Then it will be presented to the informal/technical TF meeting.
iii. All payments will be made in the form of cheques (not cash) after satisfactory completion of the final project report.
iv. Cheques for projects will require signatures from both Vilabouly District Chairman/representative and the LXML Co-Chairman. All budgets/cheques will be transferred to the official Vilabouly District bank account.

## 8. Administration Budget

The purpose of this budget **(US$15,000)** of the total TF budget is to provide the District with funds to support:

i. District staff training and staff development.
ii. Promote and support the district to work at the grass-roots level.
iii. Purchases of minor assets up to $2,000 for office work. Recurring costs for operations of District Office should be charged to Administration. For example: electric power and water supply.
iv. The bank's monthly service fee has to be taken from the administration budget.
v. The administration budget will not be used for vehicle purchase.

## 9. Maintenance Budget

i. **US$30,000** allocation for annual maintenance project. This allocation is intended to use for maintenance project of other infrastructure under responsibility of the District.

## 10. Debt and repayments

i. Construction of large projects occasionally exceeds the scope of Trust Fund budget in one calendar year. Borrowing from future years (creating debt) can be a good way to pay for these projects. LXML and the District agree that occasional debt is permissible, but it must be closely monitored and controlled in order to ensure that debt does not become unmanageable.
ii. A presentation on debt must be included in the Annual Meeting which shows: new debt, current debt, amount to be paid this calendar year, and outstanding debt at the end of the year.
iii. Any new projects creating debt must be specifically shown as new debt at the Annual Meeting, given a time table for repayment, and shown in the context of the total outstanding Trust Fund debt.
iv. Maximum debt shall not exceed 100% of the value of the annual Trust Fund amount. Generally, debt will be kept below $250,000.
v. All new debts must be repaid in fixed amounts and complete within Five Year Plan (year 2011 – 2015).
vi. The District is completely financially responsible for all and any debts of the Trust Fund. In case the mining operation is going to close, the company should inform the district 1.5 – 2 years in advance so appropriate action can be taken to limit commitments.

The agreement above will be effective after both sides are agreed and signed; and be revised and improved after 2 – 3 years in order to respond to changing situations.

**<u>Chairman of the Trust Fund, VBL</u>**
**<u>District Governor</u>**

ບົວສອນ ມັງໜາລົງ

**<u>Co-Chairman of LXML</u>**
**<u>Manager of CR Department</u>**

ສຕີບພ ຈິມເປວ
STEVE GIMPEL